ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 12 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 20 ມີນາ 2019

ສຳນັກງານ ຄຄຊ
ເລກທີ 0271
ລົງວັນທີ 21 MAR 2019
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ

## ປະຈຳອາທິດທີ 04-08/03/2019 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

**I. ວຽກງານການເມືອງແນວຄິດ**

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

**II. ການເຄື່ອນໄຫວວຽກງານວິຊາສະເພາະ**

**1. ສະພາບເສດຖະກິດເງິນຕາສາກົນ**

**1.1 ອັດຕາແລກປ່ຽນສາກົນ**

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,41% ທຽບໃສ່ເອີໂຣ ເນື່ອງຈາກເສດຖະກິດຂອງສະຫະລັດອາເມລິກາອອກມາດີ ເຫັນໄດ້ຈາກອັດຕາສ່ວນການຫວ່າງງານແມ່ນຫຼຸດລົງຢູ່ໃນລະດັບ 3,8% ໃນເດືອນ 02/2019 ຈາກທີ່ເພີ່ມຂຶ້ນຢູ່ໃນລະດັບ 4,0% ໃນເດືອນຜ່ານມາ. ພ້ອມກັນນັ້ນ, ຕົວເລກດັດຊະນີຂະແໜງບໍລິການຂອງສະຫະລັດອາເມລິກາ ເພີ່ມຂຶ້ນຢູ່ໃນລະດັບ 59,7 ຈຸດ ຈາກທີ່ຫຼຸດລົງຢູ່ລະດັບ 56,7 ຈຸດໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 25/02-01/03/2019 | ອາທິດນີ້ 04-07/03/2019 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1359 | 1,1313 | 0,41% |
| ເຢນ/ໂດລາ | 111,89 | 111,72 | 0,15% |
| ບາດ/ໂດລາ | 31,720 | 31,800 | -0,25% |
| ເປໂຊ/ໂດລາ | 51,83 | 52,22 | -0,75% |
| ຣູເປັຍ/ໂດລາ | 14.110,00 | 14.145,00 | -0,25% |
| ໂດລາສິງກະໂປ/ໂດລາ | 1,3524 | 1,3572 | -0,35% |
| ຢວນ/ໂດລາ | 6,7058 | 6,7076 | -0,03% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ເພີ່ມຂຶ້ນ 1,48% ເປັນ 58,35 ໂດລາ/ບາເຣວ ເນື່ອງຈາກຄວາມຕ້ອງການຊົມໃຊ້ນ້ຳມັນເພີ່ມຂຶ້ນຊຶ່ງເຫັນໄດ້ຈາກຄັງສຳຮອງນ້ຳມັນແອັດຊັງຂອງ ສະຫະລັດອາເມລິກາ ຫຼຸດລົງໃນລະດັບ 4,23 ລ້ານບາເຣວຈາກຫຼຸດລົງໃນລະດັບ 1,91 ລ້ານບາເຣວ. ພ້ອມກັນນັ້ນ, ລາຄານ້ຳມັນຍັງໄດ້ຮັບຜົນກະທົບຈາກເຮືອຂົນສົ່ງນ້ຳມັນດິບ ຈຳນວນ 10 ລຳ ຂອງບໍລິສັດນ້ຳມັນແຫ່ງຊາດຂອງປະເທດຊາອຸດິອາຣະເບຍ ບໍ່ສາມາດຈອດທຽບທ່າເຮືອປາຍທາງໄດ້ ເນື່ອງຈາກການ ຂວ້ຳບາດຂອງ ສ. ອາເມລິກາ ເຮັດໃຫ້ບໍ່ສາມາດສົ່ງອອກນ້ຳມັນດິບໄດ້ ແລະ ບໍລິສັດນ້ຳມັນແຫ່ງຊາດຂອງປະເທດຊາອຸດິອາຣະເບຍຕ້ອງໄດ້ຢຸດໜ່ວຍການຜະລິດບາງໜ່ວຍລົງ;
- ລາຄາຄຳ ຫຼຸດລົງ 1,63% ເປັນ 1.286,64 ໂດລາ/ອອນ ເນື່ອງຈາກເງິນໂດລາແຂງຄ່າ ເຮັດໃຫ້ນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກັບກຳໄລ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາ ອ່ອນຄ່າລົງ 0,20% ແຕ່ແຂງຄ່າຂຶ້ນ 0,43% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 0,33% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 2,94% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 25/2-01/03/2019 | | | ອາທິດນີ້ 04-07/03/2019 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.610,66 | 8.641,33 | 8.625,83 | 8.624,51 | 8.659,33 | 8.643,01 | -0,16% | -0,21% | -0,20% | -0,26% | -0,37% | -0,33% |
| ບາດ | 275,16 | 276,70 | 276,28 | 274,07 | 275,77 | 275,09 | 0,40% | 0,34% | 0,43% | -2,87% | -3,01% | -2,94% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 1,25% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ຖານເງິນຕາ ເພີ່ມຂຶ້ນ 16,86%
- ປະລິມານເງິນ M2 ເພີ່ມຂຶ້ນ 0,33% ທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 9,85%

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (04-07/03/2019) ເຫັນວ່າ ທທກ ຊື້ເງິນໂດລາສຸດທິ 4,76 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 30,84 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 26,08 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 477,63 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 158,62 ລ້ານບາດ ແລະ ຂາຍເງິນບາດໄດ້ 636,25 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາ ຫຼຸດລົງ 22,91% ແລະ ເງິນບາດ ຫຼຸດລົງ 23,31%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ດັດສົມໂດຍການຂາຍເງິນໂດລາສຸດທິທະນາຄານທຸລະກິດ ຈຳນວນ 0,20 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 25,90 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 4,20 ລ້ານໂດລາ ແລະ ເງິນບາດ ຈຳນວນ 89,89 ລ້ານບາດ;

---

[1]% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ: ທຫລ ໄດ້ຂາຍເງິນໂດລາສຸດທິ ຈຳນວນ 1,67 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 137,87 ລ້ານບາດ.

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 22-28/02/2019 | | ອາທິດນີ້ 01-07/03/2019 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **41,03** | **125,67** | **30,84** | **158,62** | **-24,84%** | **26,22%** |
| - ທ/ຄທຸລະກິດລັດ | 18,50 | 60,72 | 16,69 | 64,75 | -9,78% | 6,64% |
| - ທ/ຄທຸລະກິດອື່ນໆ | 22,53 | 64,95 | 14,15 | 93,87 | -37,19% | 44,53% |
| **2. ການຂາຍເງິນຕາຕ່າງປະເທດ** | **32,81** | **910,77** | **26,08** | **636,25** | **-20,51%** | **-30,14%** |
| - ທ/ຄທຸລະກິດລັດ | 11,99 | 340,94 | 12,59 | 360,46 | 5,00% | 5,73% |
| - ທ/ຄທຸລະກິດອື່ນໆ | 20,82 | 569,83 | 13,49 | 275,79 | -35,21% | -51,60% |
| **ຊື້-ຂາຍສຸດທິ ທທກ** | **8,22** | **-785,10** | **4,76** | **-477,63** | **-42,09%** | **-39,16%** |
| - ຜົດດ່ຽງຊື້-ຂາຍ | 20,03% | -624,73% | 15,43% | -301,12% | -22,94% | -51,80% |
| **- ມູນຄ່າການຊື້-ຂາຍ** | **73,84** | **1.036,44** | **56,92** | **794,87** | **-22,91%** | **-23,31%** |
| **3. ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ** | **-8,63** | **-26,50** | **-0,20** | **-25,90** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 8,63 | 26,50 | 0,20 | 25,90 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **19,76** | **303,97** | **4,20** | **89,89** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **-1,67** | **-137,87** | **-1,67** | **-137,87** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 1,67 | 137,87 | 1,67 | 137,87 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 03/2019 ຄາດວ່າຈະຢູ່ໃນລະດັບ 1,42%.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ**

ທະນາຄານແຫ່ງ ສປປ ລາວ ໄດ້ມີກະແສເງິນໄຫຼເຂົ້າສຸດທິ ຜ່ານລະບົບທະນາຄານ ຈຳນວນ 30,55 ລ້ານໂດລາສະຫະລັດ. ໃນນັ້ນ, ປະຈຳອາທິດວັນທີ (01-07/03/2019) ໃນນັ້ນ, ກະແສເງິນໄຫຼເຂົ້າ ມີຈຳນວນ 140,99 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຮັບຈາກການສົ່ງອອກສິນຄ້າ ຈຳນວນ 78,59 ລ້ານໂດລາສະຫະລັດ, ຈາກການລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 32,37 ລ້ານໂດລາສະຫະລັດ ແລະ ຮັບຈາກການໃຫ້ບໍລິການ ຈຳນວນ 14,34 ລ້ານໂດລາສະຫະລັດ). ກະແສເງິນໄຫຼອອກ ມີຈຳນວນ 110,44 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່ານຳເຂົ້າສິນຄ້າ ຈຳນວນ 76,76 ລ້ານໂດລາສະຫະລັດ, ຊຳລະຄ່າບໍລິການ ຈຳນວນ 17,80 ລ້ານໂດລາສະຫະລັດ ແລະ ອະນຸພັນທາງການເງິນ ຈຳນວນ 10,17 ລ້ານໂດລາສະຫະລັດ).

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 532 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 164 ສະບັບ, ລວມມູນຄ່າໂອນທັງໝົດ 257,87 ຕື້ກີບ, ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 76,80 ຕື້ກີບ ເທົ່າກັບ 22,95%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (01-07/03/2019) ມີທັງໝົດ 4.406 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 4.374 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ ຈຳນວນ 210 ຕື້ກີບ ຈາກ 2.064,87 ຕື້ກີບ ມາເປັນ 2.283,81 ຕື້ກີບ ເທົ່າກັບ 10,60%;
- **ກະຊວງການເງິນ:** ການເຄື່ອນໄຫວຂອງກະຊວງການເງິນມີການໂອນເງິນຈຳນວນ 32 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ ຈຳນວນ 93,43 ຕື້ກີບ ຈາກ 184,75 ຕື້ກີບ ມາເປັນ 278,19 ຕື້ກີບ ເທົ່າກັບ 50,57%.

**4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>**

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 819,18 ຈຸດ ເພີ່ມຂຶ້ນ ຈາກ 805,99 ຈຸດ ຫຼື ເທົ່າກັບ 1,64% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 268,000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,04 ຕື້ກີບ ຫຼຸດລົງ 29,42% ເມື່ອທຽບໃສ່ອາທິດຜ່ານມາ, ໃນນັ້ນ ເປັນການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດກວມເອົາ 74,72%. ສາເຫດການເພີ່ມຂຶ້ນຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວເພີ່ມຂຶ້ນຂອງລາຄາຮຸ້ນ PTL ແລະ EDL-GEN.

**<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u>**

| ບໍລິສັດ | ອາທິດກ່ອນ(22-28/02/2019) | | | ອາທິດນີ້(01-07/03/2019) | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ | ມູນຄ່າການ ຊື້-ຂາຍ | ລາຄາ ປ່ຽນແປງ (%) |
| **BCEL** | 214.400 | 1.276.365.000 | 6.100 | **19.000** | **115.180.000** | **6.100** | **-91,14** | **-90,98** | - |
| **EDL-GEN** | 29.000 | 113.193.000 | 3.900 | **211.400** | **825.485.000** | **3.950** | **628,97** | **629,27** | **1,28** |
| **LWPC** | - | - | 7.150 | - | - | **7.150** | - | - | - |
| **PTL** | 5.500 | 4.069.000 | 730 | - | - | **1.060** | **-100** | **-100** | **45,21** |
| **SVN** | 45.300 | 90.600.000 | 2.000 | **1.300** | **2.590.000** | **2.000** | **-97,13** | **-97,14** | - |
| **PCD** | 800 | 792.000 | 1.080 | **100** | **108.000** | **1.070** | **-87,50** | **-86,36** | **-0,93** |
| **LCC** | - | - | 2.270 | - | - | **2.270** | - | - | - |
| **MHTL** | 200 | 590.000 | 2.950 | **36.200** | **106.240.000** | **2.950** | **18.000** | **17.906,78** | - |
| **LAT** | 2.000 | 1.450.000 | 725 | - | - | **725** | **-100** | **-100** | - |
| ທັງໝົດ | 297.200 | 1.487.059.000 | | **268.000** | **1.049.603.000** | | **-9,83** | **-29,42** | |

**5. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>**

- **ສຳເລັດການເຂົ້າຮ່ວມກອງປະຊຸມ:** ❶ ກອງປະຊຸມຄົບຄະນະບໍລິຫານງານພັກ ທຫລ ສະໄໝທີ III ປະຈຳປີ 2018;❷ ກອງປະຊຸມລັດຖະມົນຕີການການເງິນ ແລະ ຜູ້ວ່າການທະນາຄານກາງອາຊຽນ;❸ ກອງປະຊຸມໃຫຍ່ປະຈຳປີຂອງບັນດາສະຖາບັນການເງິນທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງໂຄງການການເງິນຈຸລະພາກການເຂົ້າເຖິງແຫຼ່ງທຶນຂອງຜູ້ທຸກຍາກໃນເຂດຊົນນະບົດ (MRA-AFP);❹ ກອງປະຊຸມປຶກສາຫາລືກຮ່ວມກັບສະຖານທູດລຸກຊຳບວກ ປະຈຳ ສປປ ລາວ ກ່ຽວກັບການຮ່າງໜັງສືຂໍການຊ່ວຍເຫຼືອຈາກກະຊວງການຕ່າງປະເທດ ລຸກຊຳບວກ; ❺ ກອງປະຊຸມສຳມະນາຂົງເຂດພາກພື້ນເພື່ອກະກຽມໃຫ້ແກ່ກອງປະຊຸມສຸດຍອດລະດັບພາກພື້ນເພື່ອຕ້ານການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ ປະເທດອິດສະຕາລີ; ❻ ກອງປະຊຸມສະຫຼຸບວຽກງານສະຫະກອນສິນເຊື່ອ ແລະ ເງິນຝາກປະຫຍັດ ປະຈຳປີ 2018 ແລະ ❼ ກອງປະຊຸມວິຊາການປຶກສາຫາລືກ່ຽວກັບການປັບປຸງຕົວຊີ້ວັດການປົກປ້ອງຜູ້ລົງທຶນລາຍຍ່ອຍ;

- **ສໍາເລັດການຈັດກອງປະຊຸມ, ສໍາມະນາ ແລະ ພິທີຕ່າງໆ:**❶ ກອງປະຊຸມຮ່ວມກັບຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ກ່ຽວກັບສະພາບລາຄາຮຸ້ນຂອງບໍລິສັດຈົດທະບຽນ 01 ແຫ່ງ ທີ່ຕໍ່າກວ່າມູນຄ່າກໍານົດ, ການກໍານົດລາຄາປິດສະເພາະ (SQ) ແລະ ການຮ່າງລະບຽບການຈົດທະບຽນຂອງ ຕລຊລ;❷ ຈັດສໍາມະນາເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນ ໃນຫົວຂໍ້ "ຄວາມເຂົ້າໃຈພື້ນຖານກ່ຽວກັບການລົງທຶນໃນຮຸ້ນ";❸ ຈັດຝຶກອົບຮົມໃນຫົວຂໍ້: ວຽກງານການຄຸ້ມຄອງທີ່ດີ ແລະ ການບໍລິຫານຄວາມສ່ຽງ;❹ ຈັດສໍາມະນາທະນາບັດແທ້-ປອມ ຂອງສະກຸນເງິນຕາຕ່າງປະເທດໃຫ້ສາຂາ ທຫລ ແຂວງຊຽງຂວາງ ແລະ ❺ ຈັດພິທີການສ້າງຂະບວນການເຕັ້ນແອໂຣບິກເນື່ອງໃນໂອກາດສະເຫຼີມສະຫຼອງວັນແມ່ຍິງສາກົນ ຄົບຮອບ 109 ປີ.
- **ສໍາເລັດວຽກງານວິຊາສະເພາະ:**❶ ສໍາເລັດການອອກແຈ້ງການຫາທະນາຄານທຸລະກິດທົ່ວລະບົບ ກ່ຽວກັບການຊໍາລະຄ່າຄຸ້ມຄອງປະຈໍາປີ 2019;❷ ສໍາເລັດການລົງກວດກາທະນາຄານ ແຄນນາເດຍ ລາວ ຈໍາກັດ ຕາມແຜນປະຈໍາປີ 2019; ❸ ຮັບຮອງລະບຽບວ່າດ້ວຍການເປີດເຜີຍຂໍ້ມູນຢູ່ຕະຫຼາດຫຼັກຊັບລາວ ສະບັບເລກທີ 008/ຕລຊລ ເພື່ອປ່ຽນແທນ ສະບັບເລກທີ 330/ຕລຊລ.

**III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>**

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກໍານົດໄວ້ໃນແຜນວຽກປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຈັດຕັ້ງປະຕິບັດ 08 ມາດຕະການຊຸກຍູ້ເສດຖະກິດທີ່ຕິດພັນກັບ ທຫລ;
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ;
- **ກະກຽມການເຂົ້າຮ່ວມກອງປະຊຸມ:**❶ ກອງປະຊຸມຄະນະກະກຽມເບື້ອງໃນເພື່ອເຂົ້າຮ່ວມກອງປະຊຸມວິທະຍາສາດກ່ຽວກັບນະໂຍບາຍການພັດທະນາເສດຖະກິດຂອງແຂວງໄຊສົມບູນ;❷ ກອງປະຊຸມຜ່ານຮ່າງດໍາລັດ CIB ຮ່ວມກັບກະຊວງຍຸຕິທໍາ;❸ ເຂົ້າຮ່ວມຮັບຟັງການນໍາສະເໜີຜະລິດຕະພັນ Digital Banking and Agent Banking ຂອງທະນາຄານຮຸ້ນສ່ວນການຄ້າທະຫານ;
- **ກະກຽມການຈັດກອງປະຊຸມ, ສໍາມະນາ ແລະ ພິທີຕ່າງໆ:** ❶ ກອງປະຊຸມປຶກສາຫາລືເພື່ອຄວາມເປັນເອກະພາບກ່ຽວກັບຮ່າງບົດບັນທຶກຜົນການກວດສອບເອກະສານລາຍງານຖານະການເງິນ ທຫລ ປະຈໍາປີ 2017; ❷ ກອງປະຊຸມຮ່ວມກັບຄະນະຮັບຜິດຊອບເພື່ອປະກອບຄໍາເຫັນຕໍ່ຮ່າງກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ); ❸ ກອງປະຊຸມວຽກງານກວດກາທະນາຄານແຫ່ງ ສປປ ລາວ ປະຈໍາປີ 2018; ❹ ກອງປະຊຸມຄົ້ນຄວ້ານິຕິກໍາຄຸ້ມຄອງເງິນຄຣິບໂຕ;❺ ກອງປະຊຸມສະພາວິຊາການ ສະຖາບັນການທະນາຄານ ສະໄໝສາມັນ ຄັ້ງທີ I ປະຈໍາປີ 2019; ❻ ກອງປະຊຸມກັນຮ່ວມກັບທະນາຄານພັດທະນາເອຊີ ADB ປະຈໍາປີ 2019 ຄັ້ງທີ່ 52 ແລະ ກອງປະຊຸມຮ່ວມລະຫວ່າງລັດຖະມົນຕີກະຊວງກະຊວງການເງິນ ແລະ ຜູ້ວ່າການທະນາຄານກາງອາຊຽນ +3 (AFMGM+3) ທີ່ປະເທດຟິຈິ; ❼ ກອງປະຊຸມພົບປະແລກປ່ຽນບົດຮຽນກັບທະນາຄານນະໂຍບາຍສັງຄົມ ຫວຽດນາມ ທີ່ ສສ ຫວຽດນາມ;❽ ຈັດພິທີພົບປະລະຫວ່າງຜູ້ມີສິດເລືອກຕັ້ງກັບສະມາຊິກສະພາແຫ່ງຊາດ ຊຸດທີ VIII ປະຈໍາເຂດເລືອກຕັ້ງທີ່ 01 ນະຄອນຫຼວງວຽງຈັນ;
- **ກະກຽມການຕ້ອນຮັບ:** ການເຂົ້າຢ້ຽມຂໍ່ານັບຜູ້ອໍານວຍການ ທະນາຄານ ອາເຮັສບີ (RHB).

ເຊັນແທນຫົວໜ້າຫ້ອງການ

ຮອງຫົວໜ້າຫ້ອງການ

ພຸມມະລີ ສີຣິພົນເດດ